ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ນະຄອນຫຼວງວຽງຈັນ**

ຫ້ອງວ່າການ

ເລກທີ 73 /ຫວນວ

ລົງວັນທີ 21 ກັນຍາ 2021

# ແຈ້ງການ

**ຮຽນ:** ບັນດາທ່ານ ຫົວໜ້າຫ້ອງການ ກະຊວງ, ອົງການຈັດຕັ້ງຕ່າງໆ ຂັ້ນສູນກາງ, ນະຄອນຫຼວງ, ຂັ້ນເມືອງ ຕະຫຼອດຮອດ ຜູ້ປະກອບການ ທີ່ມີສໍານັກງານຫ້ອງການ ຕັ້ງຢູ່ນະຄອນຫຼວງວຽງຈັນ.

**ເລື່ອງ:** ການເຮັດໜັງສືຢັ້ງຢືນ ໃຫ້ພະນັກງານຂອງຕົນ ທີ່ປະຈໍາການ ໃນຊ່ວງໄລຍະປະຕິບັດ ມາດຕະການ ປິດການສັນຈອນຫ້າມເດີນທາງໄປມາ ໂດຍບໍ່ໄດ້ຮັບອະນຸຍາດ ພາຍໃນ 7 ເມືອງ ຄື: ເມືອງ ໄຊເຊດຖາ ສີສັດຕະນາກ,ຈັນທະບູລີ, ສີໂຄດຕະບອງ,ຊະເຊດຖາ, ນາຊາຍທອງ, ຫາດຊາຍຟອງ ແລະ ເມືອງໄຊທານີ.

- ອີງຕາມ ຄໍາສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021;
- ອີງຕາມ ແຈ້ງການຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 1187/ຫສນຍ, ລົງວັນທີ 18 ກັນຍາ 2021;
- ອີງຕາມ ຄໍາສັ່ງເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 016/ຈນວ, ລົງວັນທີ 19 ກັນຍາ 2021 ກ່ຽວກັບມາດ ຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຢູ່ນະຄອນຫຼວງວຽງຈັນ;
- ອີງຕາມ ການຊີ້ນໍາ ຂອງກອງປະຊຸມຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະ ຍາດ COVID-19 ນະຄອນຫຼວງວຽງຈັນ ຄັ້ງວັນທີ 20 ກັນຍາ 2021.

ຫ້ອງວ່າການນະຄອນຫຼວງວຽງຈັນ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:
ໃຫ້ ບັນດາທ່ານຫົວໜ້າຫ້ອງການ ຂອງການຈັດຕັ້ງທຸກພາກສ່ວນ ເປັນເຈົ້າການເຮັດໜັງສືຢັ້ງຢືນໃຫ້ພະນັກງານຂອງຕົນ ທີ່ປະຈໍາການ ໂດຍໃຫ້ມີເນື້ອໃນ ດັ່ງນີ້: ❶ ຊື່ ນາມສະກຸນ, ❷ ກົມກອງສັງກັດ, ❸ ເລກບັດປະຈໍາຕົວ (ບັດພະນັກງານ ຖ້າມີ), ❹ ບ່ອນພັກອາໄສ, ເຮືອນເລກທີ, ຊື່ບ້ານ, ຊື່ເມືອງ ແລະ ອື່ນໆ ທີ່ສາມາດກວດສອບໄດ້ ❺ ເປັນບຸກຄົນບໍ່ຢູ່ເຂດບ້ານແດງ, ❻ ເປັນບຸກຄົນໄດ້ຮັບວັກຊີນຄົບໂດສ (ຖືບັດຮັບວັກຊີນມາພ້ອມ), ❼ ບໍ່ແມ່ນຜູ້ສໍາຜັດໃກ້ຊິດກັບຜູ້ຕິດເຊື້ອ (C1), ❽ ວັນທີປະຈໍາການ(ຕາຕະລາງປະຈໍາການ).

**ໝາຍເຫດ:** - ຖ້າຖືກມື້ປະຈໍາການໃຫ້ຖືເອກະສານຢັ້ງຢືນຈາກກົມກອງ ເພື່ອແຈ້ງຕໍ່ເຈົ້າໜ້າທີ່ປະຈໍາດ່ານກວດກາທຸກຄັ້ງ.
- ກໍລະນີບໍ່ແມ່ນມື້ປະຈໍາການແຕ່ມີວຽກຈໍາເປັນ ຕ້ອງມີການຢັ້ງຢືນຈາກກົມກອງສະເພາະ ຫຼື ໄດ້ຮັບອະນຸຍາດ ຈາກຄະນະສະເພາະກິດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຕາມເນື້ອໃນຂ້າງເທິງດ້ວຍ.

**ຫົວໜ້າຫ້ອງວ່າການ ນະຄອນຫຼວງວຽງຈັນ**

ບ່ອນສົ່ງ:
- ຄະນະປະຈໍາພັກ ນວ ທ່ານລະ 01ສະບັບ;
- ຄະນະສະເພາະກິດ ນວ ບ່ອນລະ 01 ສະບັບ
- ກອງເລຂາ ຄະນະສະເພາະກິດ ນວ 01 ສະບັບ;
- ເກັບມ້ຽນສໍານີາ 02 ສະບັບ.

ປອ. ໄພຄໍາ ໄຊຍະສອນ